Australian Government

Department of Health

# TGA ສົ່ງເສີມໃຫ້ຄົນອອສເຕຣລຽນໝັ້ນໃຈໃນການສັກຢາຕ້ານ COVID-19

ຢາວັກຊີນຕ້ານ COVID-19 ຈະມີບົດບາດອັນໃຫຍ່ຫຼວງໃນການຕໍ່ສູ້ກັບການລະບາດຂອງໂຄໂຣນາໄວຣັສ.

ຄະນະກຳມະການຄຸ້ມຄອງສິນຄ້າທີ່ໃຊ້ໃນດ້ານການປິ່ນປົວແຫ່ງປະເທດອອສເຕຣເລັຍ (TGA) ມີໜ້າທີ່ຮັບຜິດຊອບໃນການປະເມີນແລະຮັບຮອງເອົາຢາວັກຊີນຕ້ານ COVID-19 ສຳລັບນຳມາໃຊ້ໃນອອສເຕຣເລັຍ. TGA ພິຈາລະນາຜົນປະໂຫຍດແລະຄວາມສ່ຽງທຸກດ້ານຂອງຢາວັກຊີນຊະນິດໃດນຶ່ງທີ່ອາດຈະນຳເອົາມາໃຊ້. ຂັ້ນຕອນຂອງ TGA ໃນການຕັດສິນຄວາມປອດໄພແລະປະສິດທິຜົນຂອງຢາວັກຊີນແມ່ນເຄັ່ງຄັດ, ກວ້າງຂວາງ - ແລະ ເປັນເອກະຣາດ.

ແຕ່ວ່າ TGA ບໍ່ໄດ້ເຮັດວຽກຢ່າງໂດດດ່ຽວ. TGA ປະຕິບັດງານຢ່າງໃກ້ຊິດກັບບັນດາຄູ່ຮ່ວມງານທົ່ວໂລກ ທີ່ມີຄວາມຮັບຜິດຊອບໃນດ້ານການຄວບຄຸມ. ພວກເຂົາເຈົ້າປະສານງານກັນເປັນປະຈຳທຸກໆມື້, ເພື່ອໃຫ້ໝັ້ນໃຈວ່າຈະໄດ້ມີການແບ່ງປັນຄວາມຮູ້ທີ່ທຸກຄົນຈະໄດ້ຜົນປະໂຫຍດຮ່ວມກັນ.

ເພື່ອທຳການຕັດສິນໃຈວ່າຈະຮັບຮອງເອົາຢາວັກຊີນຊະນິດໃດນຶ່ງນັ້ນ, TGA ຈະປະເມີນເບິ່ງຂໍ້ມູນທາງວິທະຍາສາດແລະທາງລະບົບຄລີນິກທຸກຢ່າງທີ່ມີຢູ່. ຂໍ້ມູນນີ້ໄດ້ມາຈາກຜູ້ຜະລິດຢາວັກຊີນແລະຈາກຫຼັກຖານອື່ນໆທີ່ມີຢູ່.

ກ່ອນທີ່ພວກເຮົາຈະຮັບຮອງໃຫ້ເອົາຢາວັກຊີນຊະນິດໃດນຶ່ງມາໃຊ້ໄດ້ນັ້ນ ກໍຕໍ່ເມື່ອມັນປອດໄພແລະມີປະສິດທິຜົນໃນລະຫວ່າງການທົດລອງທາງດ້ານຄລີນິກແລະຫຼັງຈາກນັ້ນດ້ວຍເຊັ່ນກັນ. ເປັນສິ່ງສຳຄັນຢ່າງຍິ່ງ ທີ່ຜູ້ຜະລິດຢາວັກຊີນຕ້ອງສະແດງໃຫ້ເຫັນວ່າຢາວັກຊີນນັ້ນສາມາດຖືກຜະລິດໄດ້ຢ່າງມີຄຸນນະພາບສູງ, ຄຸນນະພາບສະໝ່ຳສະເໝີແລະຄວບຄຸມໄດ້.

ຖ້າວ່າ TGA ຮັບຮອງເອົາຢາວັກຊີນຊະນິດໃດນຶ່ງ, ທ່ານກໍສາມາດໄວ້ວາງໃຈໄດ້ວ່າມັນຈະໃຊ້ເປັນຜົນໃນການຕ້ານ COVID-19. ຢາວັກຊີນຈະຫຼຸດຈຳນວນຄົນທີ່ຈະເຈັບປ່ວຍຢ່າງຮ້າຍແຮງແລະເສັຍຊີວິດຍ້ອນໄວຣັສນີ້.

ຫຼັງຈາກການຮັບຮອງແລ້ວ, ພາຣະໜ້າທີ່ຂອງພວກເຮົາຍັງຈະສືບຕໍ່ໄປອີກ. ພວກເຮົາຈະສືບຕໍ່ຕິດຕາມເບິ່ງຄວາມປອດໄພຂອງຢາວັກຊີນຢ່າງໃກ້ຊິດແລະຍັງຈະປະເມີນເບິ່ງຄຸນນະພາບຂອງຢາທຸກໆຊຸດໃນອອສເຕຣເລັຍ.

ໂດຍຖືວ່າເປັນພາລະກິດທີ່ມີບູລິມະສິດສູງສຸດ, TGA ກຳລັງທຳການທົບທວນເບິ່ງຢາວັກຊີນຕ້ານ COVID-19 ຢ່າງຄົບຖ້ວນ – ແຕ່ວ່າໃນຂອບເຂດເວລາທີ່ສັ້ນກວ່າປົກກະຕິ.

ວິທີການທີ່ນຳມາໃຊ້ໃນອອສເຕຣເລັຍຈະຕ້ອງຮັບປະກັນວ່າປະຊາຊົນຕ້ອງມີຄວາມໝັ້ນໃຈສູງຂຶ້ນໃນຢາວັກຊີນ. ອັນນີ້ ຈະເຮັດໃຫ້ເຮົາໄດ້ຮັບຜົນທາງສຸຂະພາບທີ່ດີທີ່ສຸດເທົ່າທີ່ຈະເປັນໄປໄດ້ຂອງຊຸມຊົນ.

ພວກເຮົາເຮັດແບບໃດຈຶ່ງສາມາດເລັ່ງລັດຂັ້ນຕອນການປະເມີນຂອງຢາວັກຊີນໄດ້ໂດຍບໍ່ໃຫ້ໄປຂັດກັບມາດຕະຖານຂອງພວກເຮົາ? TGA ໄດ້ຮັບຂໍ້ມູນຕ່າງໆຈາກບັນດາຜູ້ຜະລິດເປັນປະຈຳ. ພວກເຮົາໄດ້ເຮັດວຽກຮ່ວມກັບພວກເຂົາເຈົ້າເພື່ອໃຫ້ໄດ້ຄຳຕອບຕໍ່ຄຳຖາມໃດໆຢ່າງວ່ອງໄວ.

ພວກເຮົາມີທີມງານຕ່າງໆທີ່ທຳການປະເມີນພາກສ່ວນຕ່າງໆຂອງການສະເໜີສົ່ງຢາວັກຊີນເຂົ້າມາ. ນອກນີ້ພວກເຮົາຍັງໄດ້ເພີ່ມຈຳນວນຄົນທີ່ເຮັດວຽກກ່ຽວກັບການຄວບຄຸມດ້ານການປະເມີນແລະຄວາມປອດໄພ. ທີມງານຂອງນັກວິຊາການຊ່ຽວຊານທີ່ອຸທິດຕົນຕໍ່ວຽກງານໄດ້ເຮັດວຽກຢ່າງຕໍ່ເນື່ອງໃນຊ່ວງເວລາພັກເທສະການ.

ທ່ານອາດຈະເຄີຍໄດ້ຍິນມາແລ້ວວ່າ TGA ໄດ້ພິຈາລະນາຄັງຂໍ້ມູນແລະຂໍ້ມູນທົ່ວໄປທີ່ເກັບກຳໄວ້ເປັນຫຼາຍໆພັນໜ້າເຈ້ຍ. ພວກເຮົາເບິ່ງຫຍັງແທ້ຈາກຂໍ້ມູນດັ່ງກ່າວ?

ພວກເຮົາເບິ່ງທຸກໆຢ່າງທີ່ຮວມເອົາປະສິດທິຜົນຂອງຢາວັກຊີນພາຍໃຕ້ສິ່ງແວດລ້ອມຂອງຫ້ອງທົດລອງ. ພວກເຮົາເບິ່ງຂັ້ນຕອນຂອງການຜະລິດ. ພວກເຮົາເບິ່ງຫຼອດຢາທີ່ຈະສົ່ງໄປຫາຫ້ອງກວດພະຍາດຂອງທ່ານໝໍແລະໂຮງໝໍ, ພ້ອມກັບເບິ່ງຂໍ້ມູນການທົດລອງດ້ານຄລີນິກ, ແລະຂໍ້ມູນດ້ານຄວາມປອດໄພຢ່າງລະອຽດ.

ລັດຖະບານອອສເຕຣລຽນ ຄາດຫວັງທີ່ຈະເລີ່ມສັກຢາວັກຊີນໃຫ້ແກ່ກຸ່ມຄົນອອສເຕຣລຽນທີ່ມີບູລິມະສິດສູງນັບຈາກກາງເດືອນຫາທ້າຍເດືອນກຸມພາເປັນຕົ້ນໄປ.

ໜ້າທີ່ຂອງພວກເຮົາທີ່ TGA ແມ່ນຮັບປະກັນກັບຄົນອອສເຕຣລຽນວ່າຢາວັກຊີນເຫຼົ່ານີ້ປອດໄພ, ມີປະສິດທິຜົນ ແລະ ໄດ້ມາດຕະຖານອັນເຄັ່ງຄັດຂອງພວກເຮົາ.

**ໂດຍສາດສະດາຈານພິເສດ John Skerritt, ຜູ້ນໍາພາຄະນະກໍາມະການຄຸ້ມຄອງສິນຄ້າທີ່ໃຊ້ໃນດ້ານການປິ່ນປົວ.**